# ບົດປະເມີນຜົນກະທົບ
# ຂອງຮ່າງປັບປຸງ ກົດໝາຍວ່າດ້ວຍ ຊັບສິນທາງປັນຍາ

## 1. ຂໍ້ມູນຕິດຕໍ່ພົວພັນ ແລະ ກຳນົດເວລາໃນການສ້າງ ຫຼື ປັບປຸງນິຕິກຳ

### 1.1 ຂໍ້ມູນຕິດຕໍ່ພົວພັນ

ຊື່ກະຊວງ: ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ
ຊື່ກົມ/ພະແນກ: ກົມ ຊັບສິນທາງປັນຍາ/ພະແນກສົ່ງເສີມ ແລະ ພັດທະນາ
ເບີໂທ : 021 219656 / 020 55878944, 020 2222 6485
ພະນັກງານຮັບຜິດຊອບ: ທ່ານ ອະພິວັດ ສົມບູນຂັນ ຫົວໜ້າພະແນກສົ່ງເສີມ ແລະ ພັດທະນາ ກົມຊັບສິນທາງປັນຍາ
ອີເມລ: aphivaths@gmail.com

### 1.2 ຊື່ນິຕິກຳ

ຊື່ຮ່າງນິຕິກຳ: ກົດໝາຍວ່າດ້ວຍຊັບສິນທາງປັນຍາສະບັບປັບປຸງ

ຮ່າງນິຕິກຳແມ່ນສະບັບ ໃໝ່ ☐ ປັບປຸງ ☑

### 1.3 ກຳນົດເວລາ

ກຳນົດເວລາ ໃນການສ້າງກົດໝາຍວ່າດ້ວຍ ຊັບສິນທາງປັນຍາ ນັບແຕ່ເລີ່ມສ້າງ ຈົນເຖິງສຳເລັດ

- ແຕ່ງຕັ້ງຄະນະຮັບຜິດຊອບສ້າງ ຮ່າງປັບປຸງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ, ສະບັບເລກທີ 00997/ກວຕ, ລົງວັນທີ 21ສິງຫາ 2016;
- ແຕ່ງຕັ້ງຄະນະຮັບຜິດຊອບສ້າງ ແລະ ປັບປຸງ ກົດໝາຍ ສົກປີ 2016, ສະບັບເລກທີ 358/ກວຕ.ກຊປ, ລົງວັນທີ 03/06/2016;
- ແຕ່ງຕັ້ງຄະນະຮັບຜິດຊອບໂຄງການປັບປຸງ ແລະ ສ້າງນິຕິກຳ ຂອງວຽກງານວິທະຍາສາດ ແລະ ເຕັກໂນໂລຊີ, ສະບັບເລກທີ 0619/ກວຕ, ລົງວັນທີ 21 ສິງຫາ 2016;
- ສຳເລັດການສ້າງຮ່າງປັບປຸງ ກົດໝາຍວ່າດ້ວຍ ຊັບສິນທາງປັນຍາ ພາຍໃນເດືອນ ມິຖຸນາ ປີ 2017
- ທາບທາມຄຳເຫັນ 14 ວັນ ຜ່ານເວັບໄຊwww.most.gov.la/Laosofficialgazetteໃນເດືອນມິຖຸນາ ປີ 2017
- ສຳເລັດການທາບທາມຄຳເຫັນຢູ່ຂັ້ນທ້ອງຖິ່ນ ທັງ 3 ພາກ ພາຍໃນເດືອນ ພຶດສະພາ-ມິຖຸນາ 2017
- ສຳເລັດການທາບທາມຄຳເຫັນຢູ່ຂັ້ນສູນກາງ ພາຍໃນເດືອນພຶດສະພາ 2017
- ສະເໜີຂໍພິຈາລະນາ ໃນກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນກໍລະກົດ ປີ 2017
- ສະເໜີເຂົ້າກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII ໃນເດືອນ ຕຸລາ-ພະຈິກ 2017 ເພື່ອພິຈາລະນາ ແລະ ຮັບຮອງ

# ບົດປະເມີນຜົນກະທົບ
# ຂອງຮ່າງປັບປຸງ ກົດໝາຍວ່າດ້ວຍ ຊັບສິນທາງປັນຍາ

## 1. ຂໍ້ມູນຕິດຕໍ່ພົວພັນ ແລະ ກຳນົດເວລາໃນການສ້າງ ຫຼື ປັບປຸງນິຕິກຳ

### 1.1 ຂໍ້ມູນຕິດຕໍ່ພົວພັນ

ຊື່ກະຊວງ: ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ
ຊື່ກົມ/ພະແນກ: ກົມ ຊັບສິນທາງປັນຍາ/ພະແນກສົ່ງເສີມ ແລະ ພັດທະນາ
ເບີໂທ : 021 219656 / 020 55878944, 020 2222 6485
ພະນັກງານຮັບຜິດຊອບ: ທ່ານ ອະພິວັດ ສົມບູນຂັນ ຫົວໜ້າພະແນກສົ່ງເສີມ ແລະ ພັດທະນາ ກົມຊັບສິນທາງປັນຍາ
ອີເມລ: aphivaths@gmail.com

### 1.2 ຊື່ນິຕິກຳ

ຊື່ຮ່າງນິຕິກຳ: ກົດໝາຍວ່າດ້ວຍຊັບສິນທາງປັນຍາສະບັບປັບປຸງ

ຮ່າງນິຕິກຳແມ່ນສະບັບ ☐ ໃໝ່ ☑ ປັບປຸງ

### 1.3 ກຳນົດເວລາ

ກຳນົດເວລາ ໃນການສ້າງກົດໝາຍວ່າດ້ວຍ ຊັບສິນທາງປັນຍາ ນັບແຕ່ເລີ່ມສ້າງ ຈົນເຖິງສຳເລັດ

- ແຕ່ງຕັ້ງຄະນະຮັບຜິດຊອບສ້າງ ຮ່າງປັບປຸງກົດໝາຍ ວ່າດ້ວຍຊັບສິນທາງປັນຍາ, ສະບັບເລກທີ 00997/ກວຕ, ລົງວັນທີ 21ສິງຫາ 2016;
- ແຕ່ງຕັ້ງຄະນະຮັບຜິດຊອບສ້າງ ແລະ ປັບປຸງ ກົດໝາຍ ສົກປີ 2016, ສະບັບເລກທີ 358/ກວຕ.ກຊປ, ລົງວັນທີ 03/06/2016;
- ແຕ່ງຕັ້ງຄະນະຮັບຜິດຊອບໂຄງການປັບປຸງ ແລະ ສ້າງນິຕິກຳ ຂອງວຽກງານວິທະຍາສາດ ແລະ ເຕັກໂນໂລຊີ, ສະບັບເລກທີ 0619/ກວຕ, ລົງວັນທີ 21 ສິງຫາ 2016;
- ສຳເລັດການສ້າງຮ່າງປັບປຸງ ກົດໝາຍວ່າດ້ວຍ ຊັບສິນທາງປັນຍາ ພາຍໃນເດືອນ ມິຖຸນາ ປີ 2017
- ທາບທາມຄຳເຫັນ 14 ວັນ ຜ່ານເວັບໄຊwww.most.gov.la/Laosofficialgazetteໃນເດືອນມິຖຸນາ ປີ 2017
- ສຳເລັດການທາບທາມຄຳເຫັນຢູ່ຂັ້ນທ້ອງຖິ່ນ ທັງ 3 ພາກ ພາຍໃນເດືອນ ພຶດສະພາ-ມິຖຸນາ 2017
- ສຳເລັດການທາບທາມຄຳເຫັນຢູ່ຂັ້ນສູນກາງ ພາຍໃນເດືອນພຶດສະພາ 2017
- ສະເໜີຂໍພິຈາລະນາ ໃນກອງປະຊຸມລັດຖະບານ ສະໄໝສາມັນ ປະຈຳເດືອນກໍລະກົດ ປີ 2017
- ສະເໜີເຂົ້າກອງປະຊຸມສະໄໝສາມັນເທື່ອທີ 4 ຂອງສະພາແຫ່ງຊາດ ຊຸດທີ VIII ໃນເດືອນ ຕຸລາ-ພະຈິກ 2017 ເພື່ອພິຈາລະນາ ແລະ ຮັບຮອງ

## 2. ບັນຫາ ແລະຈຸດປະສົງ

### 2.1 ບັນຫາ

ພາຍຫຼັງຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຊັບສິນທາງປັນຍາສະບັບປັບປຸງປີ 2011 ໄດ້ໃນໄລຍະ 5 ປີກວ່າ ເຫັນວ່າມີຄວາມຈຳເປັນທີ່ຕ້ອງໄດ້ປັບປຸງຄືນໃຫ້ຮັດກຸມ, ລະອຽດ, ຄົບຖ້ວນ ສາມາດຈັດຕັ້ງປະຕິບັດໄດ້ ແລະ ສອດຄ່ອງກັບສະພາບການພັດທະນາເສດຖະກິດ-ສັງຄົມໃນໄລຍະປັດຈຸບັນໂດຍສະເພາະແມ່ນສອດຄ່ອງກັບແນວທາງນະໂຍບາຍ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີ ຄັ້ງທີ 8 ຮອດປີ 2020, ແຜນຍຸດທະສາດພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ຂອງ ສປປ ລາວ ໄລຍະ 10 ປີ (2016-2025) ແລະ ວິໄສທັດຮອດປີ 2030 ຂອງກະຊວງວິທະຍາສາດ ແລະ ເຕັກໂນໂລຊີ, ເພື່ອສາມາດເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນໂດຍສະເພາະຄວາມສອດຄ່ອງກັບຂໍ້ບັນຍັດຂອງສົນທິສັນຍາຫຼື ສັນຍາສາກົນທີ່ ສປປ ລາວ ເປັນພາຄີໃນປະຈຸບັນເຊັ່ນເຂົ້າເປັນສະມາຊິກ: ອົງການຊັບສິນທາງປັນຍາໂລກ (WIPO) ວັນທີ 17 ມັງກອນ 1995; ສົນທິສັນຍາປາຣີວ່າດ້ວຍການປົກປ້ອງຊັບສິນອຸດສາຫະກຳ (Paris Convention) ວັນທີ 8 ຕຸລາ 1998; ສົນທິສັນຍາ ວ່າດ້ວຍການຮ່ວມມືສິດທິບັດ (PCT) ວັນທີ 14 ມິຖຸນາ 2004; ສົນທິສັນຍາເບີນ ວ່າດ້ວຍການປົກປ້ອງຜົນງານທາງດ້ານວັນນະກຳ ແລະ ສິລະປະກຳ (Bern Convention) ວັນທີ 14 ມີນາ 2012; ເຂົ້າເປັນສະມາຊິກອົງການການຄ້າໂລກ (WTO), ຂໍ້ຕົກລົງ ວ່າດ້ວຍການຄ້າທີ່ກ່ຽວຂ້ອງກັບສິດທາງດ້ານຊັບສິນທາງປັນຍາ (TRIPS Agreement) ວັນທີ 2 ກຸມພາ 2013; ອະນຸສັນຍາມາດຣິດວ່າດ້ວຍການຈົດທະບຽນສາກົນກ່ຽວກັບເຄື່ອງໝາຍການຄ້າ (Madrid Protocol) ວັນທີ 7 ທັນວາ 2015.ໃນຕໍ່ໜ້າ ສປປ ລາວ ມີແຜນຈະເຂົ້າເປນພາຄີຂອງສະຫະພັນສາກົນວ່າດ້ວຍການປົກປ້ອງພັນພືດ(UPOV); ສົນທິສັນຍາ ວ່າດ້ວຍການຈົດທະບຽນສາກົນກ່ຽວກັບແບບອຸດສາຫະກຳ(HagueAgreement),ສົນທິສັນຍາ ວ່າດ້ວຍການປົກປ້ອງຜູ້ສະແດງ, ຜູ້ຜະລິດການບັນທຶກສຽງ ແຜ່ພາບ(Rome Convention of Performer, Producer of Phonogram and Broadcasting Organization) ແລະ ອື່ນໆ. ສະນັ້ນ, ຈິ່ງມີຄວາມຈຳເປັນໃນການສືບຕໍ່ປັບປຸງ ແລະ ພັດທະນານິຕິກຳທາງດ້ານຊັບສິນທາງປັນຍາ ໃຫ້ມີປະສິດທິພາບດີກວ່າເກົ່າ ແລະ ສອດຄ່ອງກັບສະພາບພາກພື້ນ ແລະ ສາກົນ.

ສະພາບການ ແລະ ບັນຫາທາງດ້ານຊັບສິນທາງປັນຍາ ໃນໄລຍະຜ່ານມາມີດັ່ງນີ້:

**ສະພາບລວມຂອງສາກົນ.**

ການພັດທະນາວຽກງານຊັບສິນທາງປັນຍາ ໃນພາກພື້ນກໍຄືສາກົນ ມີການພັດທະນາຢ່າງໄວວາ ແລະ ໄດ້ມີການອຳນວຍຄວາມສະດວກ ຕໍ່ກັບການຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່ ແລະ ແຈ້ງຂໍ້ມູນລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ແລະ ການແກ້ໄຂຂໍ້ຂັດແຍ່ງ ທາງຊັບສິນທາງປັນຍາ ໂດຍໄດ້ສ້າງນິຕິກຳຮ່ວມກັນ ແລະ ການເຂົ້າຮ່ວມເປັນພາຄີ ສົນທິສັນຍາສາກົນຕ່າງໆ ໂດຍສະເພາະແມ່ນ ພາຍໃນອາຊຽນ ເພື່ອປົກປ້ອງສິດຊັບສິນທາງປັນຍາ.

ສະເພາະ ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ ໄດ້ພັດທະນາ ວຽກງານຊັບສິນທາງປັນຍາ ແລະ ເຮັດໜ້າທີ່ ໃນການຄຸ້ມຄອງ ແລະ ການປົກປ້ອງ ວຽກງານຊັບສິນທາງປັນຍາ ຢູ່ ສປປ ລາວ ຢ່າງເປັນລະບົບ ແລະ ໄດ້ເຄື່ອນໄຫວເຂົ້າຮ່ວມບັນດາອົງການຈັດຕັ້ງຕ່າງໆຢູ່ໃນພາກພື້ນ ແລະ ສາກົນ ໃນຂົງເຂດວຽກງານທາງດ້ານຊັບສິນທາງປັນຍາ ເຊັ່ນ:

**ສະພາບການພາຍໃນ**

ເພື່ອເຮັດໃຫ້ ສປປ ລາວມີການພັດທະນາທາງດ້ານເສດຖະກິດແບບກ້າວກະໂດດ,ມີການນໍາໃຊ້ ວິທະຍາສາດ ແລະ ເຕັກໂນໂລຊີທີ່ທັນສະໄໝເຂົ້າໃນການຜະລິດ, ສົ່ງເສີມ ການຄົ້ນຄວ້າ ແລະ ພັດທະນາ ວິທະຍາສາດ ແລະ ເຕັກໂນໂລຊີ, ສົ່ງເສີມ ການລົງທຶນຢູ່ພາຍໃນ ແລະ ຈາກຕ່າງປະເທດຢ່າງເປີດກວ້າງ. ເພື່ອເຮັດໃຫ້ວຽກງານດັ່ງກ່າວມານີ້ມີການພັດທະນາໃນຕໍ່ໜ້າ ສປປ ລາວ ມີຄວາມຈໍາເປັນຕ້ອງປັບປຸງລະບົບຊັບສິນທາງປັນຍາໃຫ້ມີປະສິດທິພາບ, ວ່ອງໄວ, ທັນສະໄໝ ແລະ ສາມາດນໍາເອົາຄວາມຮູ້ດ້ານນະວັດຕະກໍາມາພັດທະນາເປັນສິນຄ້າ ແລະ ບໍລິການ ແລະ ນໍາໃຊ້ຊັບສິນທາງປັນຍາເປັນເຄື່ອງມືໃນການພັດທະນາເສດຖະກິດ-ສັງຄົມຢູ່ ສປປ ລາວ.

ໃນໂລກແຫ່ງການແຂ່ງຂັນທາງດ້ານທຸລະກິດ ແລະ ຕະຫຼາດການຄ້າເສລີນັ້ນ, ໂດຍສະເພາະ ທີ່ ສປປ ລາວ ກໍ່ຄືປະເທດສະມາຊິກອາຊຽນ ໄດ້ເຂົ້າເປັນປະຊາຄົມເສດຖະກິດອາຊຽນ (AEC) ຊຶ່ງເປັນຖານການຜະລິດດຽວ ແລະ ຕະຫຼາດດຽວ ໃນທ້າຍ 2015. ບັນຫາການປົກປ້ອງຊັບສິນທາງປັນຍາ ແມ່ນນັບມື້ນັບມີຄວາມສໍາຄັນໃນຍຸກເສດຖະກິດປັດຈຸບັນ, ການພັດທະນາ ແລະ ຂະຫຍາຍຕົວທາງດ້ານເຕັກໂນໂລຊີ ແລະ ລະບົບໂທລະຄົມສື່ສານຢ່າງວ່ອງໄວໄດ້ກະຕຸກຊຸກຍູ້ໃຫ້ເສດຖະກິດໂລກໃນຍຸກສະໄໝໃໝ່ຈະເລີນເຕີບໂຕຂຶ້ນ ຜົນສໍາເລັດຂອງການພັດທະນາເຕັກໂນໂລຊີນັ້ນ ສ່ວນໜຶ່ງກໍຍ້ອນມີລະບົບຊັບສິນທາງປັນຍາທີ່ດີ ເພາະການນໍາໃຊ້ລະບົບຊັບສິນທາງປັນຍາຢ່າງມີປະສິດທິຜົນ ຈະກະຕຸກຊຸກຍູ້ ແລະ ສົ່ງເສີມຫົວຄິດປະດິດສ້າງຂອງມະນຸດ, ສົ່ງເສີມການຖ່າຍທອດເຕັກໂນໂລຊີ ກໍ່ຄືການລົງທຶນຈາກຕ່າງປະເທດ, ສົ່ງເສີມທຸລະກິດການຄ້າທາງພາຍໃນ ແລະ ລະຫວ່າງປະເທດ ແລະ ຮັບປະກັນຄວາມເປັນທໍາໃນສັງຄົມ. ນອກຈາກນີ້ວຽກງານຊັບສິນທາງປັນຍາ ເປັນວຽກງານໜຶ່ງທີ່ຊ່ວຍໃນການພັດທະນາ ເສດຖະກິດຂອງຊາດຊຶ່ງໃນຫຼາຍໆປະເທດ ຢູ່ໃນໂລກໄດ້ຖືບັນຫານີ້ເປັນບັນຫາສໍາຄັນ ແລະ ມີບົດບາດສໍາຄັນໃນການປະກອບສ່ວນເຂົ້າໃນການຫັນປະເທດໃຫ້ເປັນປະເທດອຸດສະຫະກໍາທັນສະໄໝເທື່ອລະກ້າວ.

ເພື່ອເປັນບ່ອນອີງໃນການເຄື່ອນໄຫວ ແລະຈັດຕັ້ງປະຕິບັດວຽກງານທາງດ້ານວຽກງານຊັບສິນທາງປັນຍາ ກະຊວງວິທະຍາສາດ ແລະ ເຕັກໂນໂລຊີໄດ້ສ້າງນິຕິກໍາກ່ຽວກັບຊັບສິນທາງປັນຍາ ເຊັ່ນ: ສ້າງກົດໝາຍວ່າດ້ວຍຊັບສິນທາງປັນຍາ ໃນປີ 2007, ປັບປຸງກົດໝາຍວ່າດ້ວຍຊັບສິນທາງປັນຍາໃນປີ2011 ແລະ ໄດ້ສ້າງລະບຽບການຈັດຕັ້ງປະຕິບັດກົດໝາຍຊັບສິນທາງປັນຍາຈໍານວນ 06 ສະບັບເຊັ່ນ: ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍຊັບສິນທາງປັນຍາກ່ຽວກັບສິດທິບັດ ແລະ ອະນຸສິດທິບັດ; ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍຊັບສິນທາງປັນຍາກ່ຽວກັບ ເຄື່ອງໝາຍການຄ້າ ແລະ ຊື່ການຄ້າ; ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍຊັບສິນທາງປັນຍາກ່ຽວກັບແບບອຸດສາຫະກໍາ; ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍຊັບສິນທາງປັນຍາກ່ຽວກັບແບບຜັງວົງຈອນລວມ; ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍຊັບສິນທາງປັນຍາກ່ຽວກັບຖິ່ນກໍາເນີດ; ຂໍ້ຕົກລົງຂອງລັດຖະມົນຕີວ່າດ້ວຍການຈັດຕັ້ງປະຕິບັດກົດໝາຍຊັບສິນທາງປັນຍາກ່ຽວກັບລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ, ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີ ວ່າດ້ວຍ ລະບຽບການ ແລະ ການປົກປ້ອງເຄື່ອງໝາຍານຄ້າ ຕາມອານຸສັນຍາ ທີ່ຕິດພັນກັບສິນທິສັນຍາ ມາດຣິດ ວ່າດ້ວຍການຈົດທະບຽນສາກົນ ກ່ຽວກັບເຄື່ອງໝາຍ ສະບັບເລກທີ 0142/ກວຕ, ລົງວັນທີ 13 ກຸມພາ 2017. ຕະຫລອດໄລຍະຜ່ານມາ ກົມຊັບສິນທາງປັນຍາ, ກະຊວງ ວິທະຍາສາດ ແລະ ເຕັກໂນໂລຊີໄດ້ຮັບຈົດທະບຽນຊັບສິນທາງປັນຍາຂົງເຂດຕ່າງໆເຊັ່ນ: ໄດ້ຮັບຄໍາຮ້ອງຂໍຈົດທະບຽນເຄື່ອງໝາຍການຄ້າ 39.484 ເຄື່ອງໝາຍ ແລະ ໄດ້ຈົດທະບຽນເຄື່ອງໝາຍການຄ້າແລ້ວ.38.171 ສະບັບ, ສິດທິບັດ 504 ຄໍາຮ້ອງ, ຮັບຄໍາຮ້ອງຂໍຈົດທະບຽນແບບອຸດສາຫະກໍາ 358 ຄໍາຮ້ອງ, ໄດ້ຮັບແຈ້ງຂໍ້ມູນລິຂະສິດ 448 ລາຍການ ແລະ ດໍາເນີນການແກ້ໄຂຂໍ້ຂັດແຍ່ງທາງຊັບສິນທາງປັນຍາ 82 ກໍລະນີ ແລະ ສາມາດແກ້ໄຂຂໍ້ຂັດແຍ່ງ ທາງດ້ານສັບສິນທາງປັນຍາ ສໍາເລັດແລ້ວ 64

ກໍລະນີ. ທັງໝົດນີ້ໄດ້ເປັນສ່ວນໜຶ່ງໃນການສົ່ງເສີມ, ປົກປ້ອງຊັບສິນທາງປັນຍາ ພ້ອມທັງເປັນການປະກອບເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ໃຫ້ມີການຂະຫຍາຍຕົວ.

ຜ່ານການເຄື່ອນໄຫວວຽກງານທາງຊັບສິນທາງປັນຍາກົດໝາຍດັ່ງກ່າວນີ້ໄດ້ເປັນເຄື່ອງມືສໍາລັບການສົ່ງເສີມ ແລະ ປົກປ້ອງຊັບສິນທາງປັນຍາ, ເຮັດໃຫ້ການຈົດທະບຽນຊັບສິນອຸດສາຫະກໍາ, ພັນພືດໃໝ່ ແລະ ການແຈ້ງຂໍ້ມູນລິຂະສິດ, ມີຄວາມວ່ອງໄວ, ການແກ້ໄຂຂໍ້ຂັດແຍ່ງ ທາງດ້ານຊັບສິນທາງປັນຍາ ທາງດ້ານບໍລິຫານຖືກຕ້ອງ ແລະ ຊັດເຈນຂຶ້ນ ແລະ ເພື່ອໃຫ້ສອດຄ່ອງກັບລະບົບການຈົດທະບຽນສາກົນ, ເສີມຂະຫຍາຍການຮ່ວມມື ແລະ ດຶງດູດການຊ່ວຍເຫຼືອທາງດ້ານຊັບສິນທາງປັນຍາ ຈາກສາກົນ.

### 2.2 ຈຸດປະສົງ

ການປັບປຸງກົດໝາຍວ່າດ້ວຍຊັບສິນທາງປັນຍາ ມີຈຸດປະສົງ ດັ່ງນີ້:

1) ເພື່ອເຮັດໃຫ້ເນື້ອໃນກົດໝາຍສະບັບປັບປຸງນີ້ໃຫ້ມີຄວາມລະອຽດ, ຮັດກຸມ, ຄົບຖ້ວນ ແລະ ສອດຄ່ອງກັບສະພາບຄວາມເປັນຈິງຂອງການພັດທະນາເສດຖະກິດ-ສັງຄົມຂອງປະເທດເຮົາໃນໄລຍະປັດຈຸບັນ.
2) ປັບປຸງເພື່ອໃຫ້ເນື້ອໃນເປັນພື້ນຖານໃນການເຂົ້າເປັນພາຄີຂອງສົນທິສັນຍາ ສະຫະພັນສາກົນ ເພື່ອການປົກປ້ອງພັນພືດ(UPOV)ຕາມເງື່ອນໄຂສັນຍາການຄ້າສອງຝ່າຍຂອງ ສປປລາວ ແລະ ສະຫະລັດ ອາເມລິກາ.
3) ປັບປຸງເພື່ອໃຫ້ເນື້ອໃນເປັນພື້ນຖານໃນການເຂົ້າເປັນພາຄີຂອງສົນທິສັນຍາ ວ່າດ້ວຍ ການຈົດທະບຽນສາກົນກ່ຽວກັບແບບອຸສາຫະກໍາ(HagueAgreement concerning International Registration of Industrial Designs).
4) ປັບປຸງເພື່ອໃຫ້ເນື້ອໃນເປັນພື້ນຖານໃນການເຂົ້າເປັນພາຄີຂອງສົນທິສັນຍາວ່າດ້ວຍ ການປົກປ້ອງ ຜູ້ສະແດງ, ຜູ້ຜະລິດການບັນທຶກສຽງ ແລະ ອົງການກະຈາຍສຽງ-ແຜ່ພາບ (Rome Convention for the Protection of Performers, Producers of Phonograms and Broadcasting Organization)
5) ປັບປຸງເພື່ອໃຫ້ກົດໝາຍສະບັບນີ້ ເປັນເຄື່ອງມືໃນການຊຸກຍູ້ໃຫ້ລະບົບຊັບສິນທາງປັນຍາຂອງ ສປປ ລາວ ມີປະສິດທິພາບ ແລະ ສາມາດເຊື່ອມໂຍງກັບພາກພື້ນ ແລະສາກົນ.

## 3. ການຄົ້ນຄວ້າ ແລະທາງເລືອກທີ່ໄດ້ພິຈາລະນາ

### 3.1 ທາງເລືອກທີ 1: ຮັກສາຕາມສະພາບການໃນປັດຈຸບັນ

ຖ້າ ສປປ ລາວ ຫາກຍັງສືບຕໍ່ ນໍາໃຊ້ກົດໝາຍ ວ່າດ້ວຍຊັບສິນທາງປັນຍາ ສະບັບປັບປຸງ 2011 ລັດຖະບານ ກໍຄືອົງການຄຸ້ມຄອງຊັບສິນທາງປັນຍາ ຕ້ອງເອົາໃຈໃສ່ ສ້າງສະຕິເຄົາລົບກົດໝາຍໃຫ້ສູງຂຶ້ນ ໂດຍສະເພາະການຈັດຕັ້ງປະຕິບັດກົດໝາຍ ແລະ ການເຊື່ອມໂຍງກັບລະບົບກົດໝາຍຂອງສາກົນທີ່ ສປປ ລາວເປັນພາຄີ.

ການຮັກສາຕາມສະພາບການໃນປັດຈຸບັນ ມີຜົນດີ ແລະ ຜົນເສຍດັ່ງນີ້:

**ຜົນດີ.**

- ບໍ່ສູນເສຍງົບປະມານຂອງລັດ ທີ່ຈະນຳໃຊ້ເຂົ້າໃນການປັບປຸງກົດໝາຍວ່າດ້ວຍຊັບສິນທາງປັນຍາ;
- ຈຳນວນບົດບັນຍັດ ທີ່ກຳນົດໄວ້ ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາກໍບໍ່ເພີ່ມຂຶ້ນ;

**ຜົນເສຍ.**

- ບົດບັນຍັດ ທີ່ກຳນົດໄວ້ ໃນກົດໝາຍ ວ່າດ້ວຍຊັບສິນທາງປັນຍາກໍບໍ່ໄດ້ຮັບການແກ້ໄຂ;
- ລະບົບການຄຸ້ມຄອງຊັບສິນທາງປັນຍາ ຈະບໍ່ ສະດວກ ແລະ ມີປະສິດທິພາບເທົ່າທີ່ຄວນ ຖ້າທຽບໃສ່ລະບົບຂອງພາກພື້ນ ແລະ ສາກົນ;
- ຈະເປັນອຸປະສັກໃນການເຂົ້າເປັນພາຄີ ສົນທິສັນຍາສາກົນໃນຕໍ່ໜ້າ.

**3.2 ທາງເລືອກທີ 2 ວິທີການແກ້ໄຂທີ່ບໍ່ແມ່ນການສ້າງກົດໝາຍວ່າດ້ວຍຊັບສິນທາງປັນຍາ**

ໃນການແກ້ໄຂວຽກງານຄຸ້ມຄອງຊັບສິນທາງປັນຍາດ້ວຍທາງເລືອກອື່ນຊຶ່ງບໍ່ແມ່ນການອອກນິຕິກຳມາຄຸ້ມຄອງນັ້ນອົງການຈັດຕັ້ງລັດ ແລະ ຂະແໜງການທີ່ກ່ຽວຂ້ອງທັງສູນກາງ ແລະ ທ້ອງຖິ່ນ ຕ້ອງເອົາໃຈໃສ່ໂຄສະນາໃຫ້ສັງຄົມ, ຜູ້ປະກອບການ, ຜູ້ຜະລິດ ແລະ ຜູ້ໃຫ້ການບໍລິການມີສະຕິເຄົາລົບ ແລະ ປະຕິບັດລະບຽບກົດໝາຍອື່ນ ທີ່ກ່ຽວຂ້ອງຢ່າງເຂັ້ມງວດ, ຍົກລະດັບ, ຝຶກອົບຮົມ ແລະ ພັດທະນາຊັບພະຍາກອນມະນຸດໃນຂົງເຂດ ອົງການຄຸ້ມຄອງຊັບສິນທາງປັນຍາທີ່ກ່ຽວຂ້ອງໃຫ້ສາມາດນຳໃຊ້ກົດໝາຍ ແລະ ລະບຽບການຢ່າງຄ່ອງແຄ້ວ ຖືກຕ້ອງ ແລະ ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ສາມາດເຂົ້າລະບົບກົດໝາຍຂອງສາກົນຢ່າງເລິກເຊິ່ງ.

ທາງເລືອກດັ່ງກ່າວນີ້ລັດຖະບານ ເວົ້າລວມ, ເວົ້າສະເພາະ ກໍຄື ກະຊວງວິທະຍາສາດ ແລະ ເຕັກໂນໂລຊີ ໄດ້ອອກຂໍ້ຕົກລົງຫລາຍສະບັບ ເພື່ອເປັນອຳນວຍຄວາມສະດວກ ແລະ ເປັນບ່ອນອີງໃນການຜັນຂະຫຍາຍຈັດຕັ້ງປະຕິບັດກົດໝາຍ ພາຍໃນ ແລະ ສົນທິສັນຍາສາກົນທີ່ ສປປ ລາວ ເປັນພາຄີ ແຕ່ກໍບໍ່ສາມາດຕອບສະໜອງໄດ້ຢ່າງສົມບູນແບບ.

**ຜົນດີ.**

- ບໍ່ເສຍເວລາ ແລະ ງົບປະມານຂອງລັດ ເຂົ້າໃນການປັບປຸງກົດໝາຍ;
- ບໍ່ເປັນການເພີ່ມພາລະຕ່າງໆຂອງອົງການຄຸ້ມຄອງຊັບສິນທາງປັນຍາ ໃນຂັ້ນສູນກາງ ແລະ ທ້ອງຖິ່ນ.

**ຜົນເສຍ.**

- ບໍ່ສາມາດຄຸ້ມຄອງ ແລະ ບໍ່ສາມາດເຊື່ອມໂຍງກັບລະບົບສາກົນໄດ້ໄດ້ເຕັມຮູບແບບ;
- ການພັດທະນາ ແລະ ການຊ່ວຍເຫຼືອດ້ານການຄຸ້ມຄອງຊັບສິນທາງປັນກໍມີຄວາມຈຳກັດ.

**3.3 ທາງເລືອກທີ 3 ການປັບປຸງກົດໝາຍວ່າກົດໝາຍວ່າດ້ວຍຊັບສິນທາງປັນຍາ**

ຜ່ານການຈັດຕັ້ງປະຕິບັດກົດໝາຍຢູ່ໃນພາກປະຕິບັດຕົວຈິງນັ້ນກໍໄດ້ເປັນເຄື່ອງມືສຳລັບ ການສົ່ງເສີມ ແລະ ປົກປ້ອງຊັບສິນທາງປັນຍາ, ເຮັດໃຫ້ການຈົດທະບຽນຊັບສິນອຸດສາຫະກຳ, ພັນພືດໃໝ່ ແລະ ການແຈ້ງຂໍ້ມູນລິຂະສິດ ແລະ ແກ້ໄຂຂໍ້ຂັດແຍ່ງທາງດ້ານຊັບສິນທາງປັນຍາ, ມີຄວາມວ່ອງໄວ, ຖືກຕ້ອງ ແລະ ຊັດເຈນຂຶ້ນກວາເກົ່າ,

ແຕ່ເມື່ອທຽບໃສ່ສະພາບການຂະຫຍາຍຕົວທາງດ້ານເສດຖະກິດ-ສັງຄົມຂອງປະເທດເຮົາ ໃນໄລຍະໃໝ່ ແລະ ເພື່ອໃຫ້ສອດຄ່ອງກັບລະບົບ ການຈົດທະບຽນສາກົນ, ຮັບປະກັນການຮ່ວມມື ແລະ ຊ່ວຍເຫຼືອທາງດ້ານ ເຕັກນິກວິຊາການ ວຽກງານຊັບສິນທາງປັນຍາໃຫ້ມີປະສິດທິພາບຍິ່ງຂຶ້ນ, ຊຶ່ງຍັງເຫັນວ່າ ຍັງມີບາງບັນຫາ ຄວນໄດ້ຮັບການປັບປຸງເພື່ອໃຫ້ສອດຄອງກັບຕົວຈິງ ສໍາລັບ ການສົ່ງເສີມ ແລະ ປົກປ້ອງຊັບສິນທາງປັນຍາຢູ່ໃນສະພາບປັດຈຸບັນ.

ການປັບປຸງກົດໝາຍສະບັບນີ້ ເພື່ອຕອບສະໜອງຄວາມຮຽກຮ້ອງຕ້ອງການ ແລະ ຮັບໃຊ້ໃຫ້ແກ່ການເຄື່ອນໄຫວວຽກງານຄຸ້ມຄອງຊັບສິນທາງປັນຍາ ທີ່ຕິດພັນກັບ ຊັບສິນອຸດສາຫະກໍາ, ພັນພືດໃໝ່ ແລະ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ຊຶ່ງໃນກົດໝາຍສະບັບນີ້ ໄດ້ກໍານົດຫລັກການ, ລະບຽບການ ແລະ ມາດຕະການຕ່າງໆ ເພື່ອການຄຸ້ມຄອງແລະຊຸກຍູ້ສົ່ງເສີມວຽກງານຊັບສິນທາງປັນຍາໃນ ສປປ ລາວ ຮັບປະກັນໃຫ້ແກ່ການປົກປ້ອງ ແລະ ການສົ່ງເສີມຊັບສິນທາງປັນຍາ ທັນສະໄໝ, ແທດເໝາະກັບຍຸກການພັດທະນາ ເສດຖະກິດ-ສັງຄົມໃນປັດຈຸບັນ ແລະ ໃນຕໍ່ໜ້າ ແບບຍືນຍົງ ແລະ ສ້າງຄວາມສາມາດເຊື່ອມໂຍງກັບພາກພື້ນ ແລະ ສາກົນ.

**ຜົນດີ:**

- ເປັນເຄື່ອງມືໃຫ້ລັດຖະບານໃນການຄຸ້ມຄອງແລະຊຸກຍູ້ສົ່ງເສີມການຄົ້ນຄວ້າປະດິດສ້າງ ແລະ ພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ ແລະ ໃນຂົງເຂດວຽກງານຊັບສິນທາງປັນຍາ;
- ມີມາດຕະການທີ່ເໝາະສົມ ໃນການສະກັດກັ້ນການລະເມີດສິດຊັບສິນທາງປັນຍາ ທີ່ສ້າງຄວາມເສຍຫາຍສິດທິຂອງເຈົ້າຂອງຊັບສິນທາງປັນຍາ, ຮັບປະກັນດ້ານສຸຂະອານາໄມ, ຂອງຄົນ, ສັດ, ຊັບພະຍາກອນທໍາມະຊາດ ແລະ ສິ່ງແວດລ້ອມ, ຮີດຄອງປະເພນີ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ;
- ກົນໄກປະສານງານ ກັບຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ມີຄວາມຊັດເຈນ ແລະ ຈະແຈ້ງຂຶ້ນຊຶ່ງເຮັດໃຫ້ການຈັດຕັ້ງປະຕິບັດ ມີຄວາມຄ່ອງຕົວ ແລະ ມີປະສິດທິຜົນດີຂຶ້ນ;
- ເຮັດໃຫ້ຜູ້ປະກອບການ, ນັກລົງທຶນ ທີ່ຕິດພັນກັບວຽກງານ ຊັບສິນທາງປັນຍາ ທັງພາຍໃນ ແລະ ຕ່າງປະເທດ ມີຄວາມໝັ້ນໃຈ ແລະ ຫັນມາລົງທຶນ ເຂົ້າໃນວຽກງານດັ່ງກ່າວ ຊຶ່ງຈະເປັນການດຶງດູດການລົງທຶນ ແລະ ພັດທະນາເສດຖະກິດ-ສັງຄົມຂອງຊາດ;
- ຮັບປະກັນ ການນໍາເຂົ້າ ແລະ ການນໍາໃຊ້ນະວັດຕະກໍາ ທີ່ມີຄວາມປອດໄພ, ມີຜະລິດຕະພັນ ແລະ ສິນຄ້າທີ່ມີລັກສະນະແຂ່ງຂັນໄດ້ກັບພາກພື້ນແລະສາກົນ;
- ປະກອບສ່ວນສໍາຄັນໃນການພັດທະນາເສດຖະກິດ-ສັງຄົມ, ເພີ່ມປະສິດທິພາບຂອງການຜະລິດ ຍົກສູງ ຄຸນນະພາບ ຊີວິດການເປັນຢູ່ຂອງປະຊາຊົນ.
- ສ້າງຄວາມເຊື່ອໝັ້ນ ໃຫ້ແກ່ບັນດານັກທຸລະກິດ, ນັກລົງທຶນ, ຜູ້ປະກອບການ ທາງການຄ້າ ແລະ ການບໍລິການຢູ່ໃນ ສປປ ລາວ.
- ການຈົດທະບຽນ ຊັບສິນອຸດສາຫະກໍາ, ພັນພືດໃໝ່ ແລະ ການແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ ເພີ່ມຂຶ້ນ.

**ຜົນເສຍ:**

- ລັດຖະບານຕ້ອງໄດ້ໃຊ້ງົບປະມານ ເຂົ້າໃນການປັບປຸງກົດໝາຍວ່າດ້ວຍຊັບສິນທາງປັນຍາ;

- ລັດຖະບານຕ້ອງໄດ້ໃຊ້ງົບປະມານເຂົ້າໃນການຄຸ້ມຄອງ, ຕິດຕາມກວດກາ ແລະ ປະເມີນໃນການເຄື່ອນໄຫວຂອງການຈັດຕັ້ງປະຕິບັດກົດໝາຍປັບປຸງສະບັບນີ້.

### 3.4 ການເລືອກເອົາວິທີການປັບປຸງກົດໝາຍວ່າດ້ວຍຊັບສິນທາງປັນຍາ

#### 3.4.1 ເຫດຜົນ

ກົດໝາຍວ່າດ້ວຍຊັບສິນທາງປັນຍາສະບັບ 2011 ຊຶ່ງນຳໃຊ້ໃນປັດຈຸບັນ ເຫັນວ່າບາງເນື້ອໃນມີຄວາມໝາຍບໍ່ທັນຈະແຈ້ງ, ບໍ່ຊັດເຈນ ແລະ ບໍ່ທັນສອດຄ່ອງກັບສະພາບການພັດທະນາຕົວຈິງ ເຮັດໃຫ້ມີຄວາມຍຸ້ງຍາກໃນການຈັດຕັ້ງປະຕິບັດ. ນອກຈາກນີ້, ຍັງເປັນການສ້າງຄວາມພ້ອມໃນການຈະເຂົ້າເປັນພາຄີສົນທິສັນຍາສາກົນ ໃນຕໍ່ໜ້າ ໂດຍສະເພາະການກະກຽມເຂົ້າເປັນພາຄີຂອງສົນທິສັນຍາ ຂອງສະຫະພັນສາກົນ ເພື່ອການປົກປ້ອງພັນພືດ(UPOV); ການກະກຽມເຂົ້າເປັນພາຄີຂອງສົນທິສັນຍາ ກ່ຽວກັບການຈົດທະບຽນສາກົນຂອງແບບອຸດສາຫະກຳ(Hague Agreement concerning International Registration of Industrial Designs); ການກະກຽມເຂົ້າເປັນພາຄີຂອງສົນທິສັນຍາ ວ່າດ້ວຍ ການປົກປ້ອງ ນັກສະແດງ, ຜູ້ຜະລິດການບັນທຶກສຽງ ແລະ ອົງການກະຈາຍສຽງແຜ່ພາບ (Rome Convention for the Protection of Performers, Producers of Phonograms and Broadcasting Organization).

ນິຕິກຳທີ່ຈະສ້າງ ນອນຢູ່ໃນປະເພດນິຕິກຳທີ່ຕ້ອງເຮັດບົດປະເມີນຜົນກະທົບຂອງຮ່າງນິຕິກຳບໍ່?

☑ ແມ່ນ ☐ ບໍ່ແມ່ນ

#### 3.4.2 ການປັບປຸງຮ່າງນິຕິກຳ

ຖ້າແມ່ນການປັບປຸງຮ່າງນິຕິກຳ,ໃຫ້ສະໜອງຂໍ້ມູນກ່ຽວກັບການປະເມີນການຈັດຕັ້ງປະຕິບັດນິຕິກຳດັ່ງກ່າວ ໃນໄລຍະຜ່ານມາ.

#### 3.4.3 ຜົນກະທົບດ້ານການແຂ່ງຂັນທາງທຸລະກິດ

☐ ຈຳກັດ ☑ ບໍ່ຈຳກັດ

#### 3.4.4 ພັນທະຕໍ່ສາກົນ

ຮ່າງນິຕິກຳຮຽກຮ້ອງໃຫ້ມີຄວາມສອດຄ່ອງກັບພັນທະຕໍ່ສາກົນຫຼືບໍ່? ☑ ແມ່ນ ☐ ບໍ່ແມ່ນ ຖ້າແມ່ນ ແມ່ນພັນທະອັນໃດ:

☑ WTO ☑ WIPO ☑ AEC ☑ FTA ☑ ອື່ນໆ

ຖ້າແມ່ນ, ຮ່າງນິຕິກຳທີ່ສະເໜີສ້າງນັ້ນມີຄວາມສອດຄ່ອງກັບພັນທະດັ່ງກ່າວນັ້ນຫຼືບໍ່

☑ ສອດຄ່ອງ ☐ ບໍ່ສອດຄ່ອງ

**3.4.5 ນິຕິກຳທີ່ພົວພັນ**

ນິຕິກຳທີ່ພົວພັນກັບກົດໝາຍວ່າດ້ວຍຊັບສິນທາງປັນຍາປະກອບມີດັ່ງນີ້:

1. ກົດໝາຍວ່າດ້ວຍການດຳເນີນຄະດີແພ່ງສະບັບເລກທີ 13 /ສພຊ, ລົງວັນທີ 4 ກໍລະກົດ 2012.
2. ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ ສະບັບເລກທີ 17 /ສພຊ, ລົງວັນທີ 10 ກໍລະກົດ 2012.
3. ປະມວນກົດໝາຍອາຍາ ສະບັບເລກທີ 12 /ສພຊ, ລົງວັນທີ 9 ພະຈິກ 2005;
4. ກົດໝາຍວ່າດ້ວຍການແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ສະບັບເລກທີ 06 /ສພຊ, ລົງວັນທີ 17 ທັນວາ 2010
5. ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນສະບັບເລກທີ14/ສພຊ, ລົງວັນທີ 17 ພະຈິກ 2016;
6. ກົດໝາຍວ່າດ້ວຍຂໍ້ຜູກພັນໃນສັນຍາ ແລະ ນອກສັນຍາສະບັບເລກທີ 01/ສພຊ, ລົງວັນທີ 8 ທັນວາ 2008
7. ກົດໝາຍວ່າດ້ວຍວິສາຫະກິດສະບັບເລກທີ46/ສພຊ, ລົງວັນທີ 26 ທັນວາ 2013
8. ກົດໝາຍວ່າດ້ວຍວິທະຍາສາດ ແລະ ເຕັກໂນໂລຊີ ສະບັບເລກທີ 30/ສພຊ, ລົງວັນທີ 19 ກໍລະກົດ 2013
9. ກົດໝາຍພາສີ ສະບັບເລກທີ 24 /ສພຊ, ລົງວັນທີ ທັນວາ 2014
10. ກົດໝາຍວ່າດ້ວຍການປົກປ້ອງຜູ້ຊົມໃຊ້ ສະບັບເລກທີ 02 /ສພຊ, ລົງວັນທີ 30 ມິຖຸນາ 2010
11. ສົນທິສັນຍາປາຣີ ວ່າດ້ວຍການປົກປ້ອງຊັບສິນອຸດສາຫະກຳ (Paris Convention), ວັນທີ 8 ຕຸລາ 1998;
12. ສົນທິສັນຍາ ວ່າດ້ວຍການຮ່ວມມືສິດທິບັດ (PCT), ວັນທີ 14 ມິຖຸນາ 2004;
13. ສົນທິສັນຍາເບີນ ວ່າດ້ວຍການປົກປ້ອງຜົນງານທາງດ້ານວັນນະກຳ ແລະ ສິລະປະກຳ (Burn Convention), ວັນທີ 14 ມີນາ 2012;
14. ຂໍ້ຕົກລົງ ວ່າດ້ວຍການຄ້າທີ່ກ່ຽວຂ້ອງກັບສິດທິທາງດ້ານຊັບສິນທາງປັນຍາ (TRIPS Agreement), ວັນທີ 2 ກຸມພາ 2013;
15. ອະນຸສັນຍາມາດຣິດ ວ່າດ້ວຍ ການຈົດທະບຽນເຄື່ອງໝາຍການຄ້າສາກົນ (Madrid Protocol), ວັນທີ 7 ທັນວາ 2015.

ນອກຈາກນິຕິກຳທີ່ກ່າວມານີ້ຄະນະຮັບຜິດຊອບປັບປຸງກົດໝາຍວ່າດ້ວຍຊັບສິນທາງປັນຍາ ຍັງໄດ້ຄົ້ນຄວ້າກ່ຽວກັບນະໂຍບາຍຕ່າງໆຂອງລັດຖະບານ ໂດຍສະເພາະແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ. ໄດ້ສຶກສາຄົ້ນຄວ້າກົດໝາຍຊັບສິນທາງປັນຍາຂອງ ສສ ຫວຽດນາມ ແລະ ຂອງບັນດາປະເທດອາຊຽນ.

## 4 ຄາດຄະເນຜົນກະທົບ ແລະ ການທາບທາມຄໍາເຫັນ

### 4.1 ສັງຄົມ

#### 4.1.1 ຜົນກະທົບ

ກົດໝາຍວ່າດ້ວຍ ຊັບສິນທາງປັນຍາສະບັບນີ້ ຈຸດປະສົງແມ່ນສົ່ງເສີມຫຼືອຄິດປະດິດສ້າງ, ການປະດິດຄິດແຕ່ງ, ເສດຖະກິດພູມປັນຍາ, ການຄຸ້ມຄອງ ແລະ ປົກປ້ອງສິດທາງດ້ານຊັບສິນທາງປັນຍາ ເພື່ອຮັບປະກັນຜົນປະໂຫຍດອັນຊອບທໍາຂອງເຈົ້າຂອງຊັບສິນທາງປັນຍາ ແລະ ຜົນປະໂຫຍດ ຂອງລັດ, ສັງຄົມ, ຊຸກຍູ້ການຄົ້ນຄວ້າ ແລະ ພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ, ການຖ່າຍທອດ ເຕັກໂນໂລຊີ ຢູ່ພາຍໃນ ແລະ ຈາກຕ່າງປະເທດ, ແນໃສ່ສົ່ງເສີມການຄ້າ, ການລົງທຶນ ແລະ ຄວາມອາດສາມາດແຂ່ງຂັນໃຫ້ແກ່ເສດຖະກິດແຫ່ງຊາດ ໃນຍຸກໂລກາພິວັດ ຢ່າງມີປະສິດທິພາບ, ປະກອບສ່ວນເຂົ້າໃນການຫັນປະເທດ ເປັນອຸດສາຫະກໍາ ແລະ ທັນສະໄໝເທື່ອລະກ້າວ.

**ຜົນກະທົບທາງບວກ**

- ການຮັບຮູ້, ປົກປ້ອງ ແລະ ຮັບປະກັນຄວາມຍຸຕິທໍາຕໍ່ເຈົ້າຂອງຊັບສິນທາງປັນຍາ;
- ຕອບສະໜອງສິດຜົນປະໂຫຍດສໍາລັບບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດທີ່ກ່ຽວຂ້ອງກັບຊັບສິນທາງປັນຍາ;
- ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຊັບສິນທາງປັນຍາ ຈະເປັນລະບົບກົນໄກປະສານງານ ກັບຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງ ມີຄວາມຊັດເຈນ ແລະ ຈະແຈ້ງຂຶ້ນຊຶ່ງເຮັດໃຫ້ການຈັດຕັ້ງປະຕິບັດ ມີຄວາມຄ່ອງຕົວ ແລະ ມີປະສິດທິຜົນດີຂຶ້ນ;
- ສ້າງເງື່ອນໄຂທີ່ຈະສົ່ງເສີມໃຫ້ເກີດນະວັດຕະກໍາໃໝ່ ແລະ ການພັດທະນາເຕັກໂນໂລຊີໄວຂຶ້ນ;
- ສ້າງຄວາມເຊື່ອໝັ້ນ ໃຫ້ແກ່ບັນດາປະເທດໃນໂລກກໍຄືພາກພື້ນ ແລະ ສາກົນ.

**ຜົນກະທົບທາງລົບ :** ບໍ່ມີ

#### 4.1.2 ເງື່ອນໄຂໃນການປະຕິບັດກົດໝາຍວ່າດ້ວຍຊັບສິນທາງປັນຍາ

ກົດໝາຍສະບັບນີ້ກໍານົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສົ່ງເສີມຫຼືອຄິດປະດິດສ້າງ, ການປະດິດຄິດແຕ່ງ, ເສດຖະກິດພູມປັນຍາ, ການຄຸ້ມຄອງ ແລະ ປົກປ້ອງສິດທາງດ້ານຊັບສິນທາງປັນຍາ ເພື່ອຮັບປະກັນຜົນປະໂຫຍດອັນຊອບທໍາຂອງເຈົ້າຂອງຊັບສິນທາງປັນຍາຢູ່ພາຍໃນ ແລະ ຈາກຕ່າງປະເທດ. ບຸກຄົນ , ນິຕິບຸກຄົນຫຼືການຈັດຕັ້ງທີ່ພົວພັນກັບການປົກປ້ອງຊັບສິນທາງປັນຍາຕ້ອງໄດ້ຈົດທະບຽນຕາມຂໍ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

**ຄາດຄະເນຄ່າໃຊ້ຈ່າຍ ຕໍ່ບຸກຄົນໃນການປະຕິບັດກົດໝາຍວ່າດ້ວຍຊັບສິນທາງປັນຍາ:**

ຄ່າໃຊ້ຈ່າຍ ເບື້ອງຕົ້ນ : ບໍ່ມີ
ຄ່າໃຊ້ຈ່າຍ ໃນແຕ່ລະປີ: ບໍ່ມີ

#### 4.1.3 ການທາບທາມຄຳເຫັນ

ການປັບປຸງຮ່າງກົດໝາຍວ່າດ້ວຍຊັບສິນທາງປັນຍາ ຄະນະຮັບຜິດຊອບໄດ້ທາບທາມຄຳເຫັນຢ່າງກ້ວາງຂວາງຈາກພາກສ່ວນຕ່າງໆທີ່ກ່ຽວຂ້ອງກັບວຽກງານຊັບສິນທາງປັນຍາພາກລັດ, ພາກທຸລະກິດ ແລະ ພາກເອກະຊົນຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນໃນຂອບເຂດທົ່ວປະເທດດ້ວຍຫຼາຍວິທີການ ເປັນຕົ້ນທາບທາມຄຳເຫັນຜ່ານເວບໄຊຈົດໝາຍເຫດທາງລັດຖະການ, ຈັດກອງປະຊຸມສຳມະນາເປີດກ້ວາງ ເພື່ອປະກອບຄຳເຫັນ.

ຜົນການຈາກການທາບທາມຄຳເຫັນຂອງທຸກພາກສ່ວນທີ່ໄດ້ກ່າວມານັ້ນຖືວ່າໄດ້ຮັບຄຳເຫັນທີ່ຫຼາກຫຼາຍ ແລະ ເປັນປະໂຫຍດໃຫ້ແກ່ຄະນະຮັບຜິດຊອບ ໃນການພິຈາລະນາຄົ້ນຄ້ວາປັບປຸງເນື້ອໃນຮ່າງກົດໝາຍວ່າດ້ວຍຊັບສິນທາງປັນຍາ ເພື່ອໃຫ້ຖືກຕ້ອງສອດຄ່ອງກັບສະພາບຄວາມເປັນຈິງໃນສັງຄົມປັດຈຸບັນ.

#### 4.1.4 ສະຫຼຸບ

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈຳນວນຊຸມຊົນທີ່ໄດ້ຮັບຜົນກະທົບ<br>( ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງຊຸມຊົນສ່ວນໃຫຍ່/ທັງໝົດໄດ້ຮັບຜົນກະທົບ) | ☑ | ☐ | ☐ |
| ຈຳນວນບຸກຄົນທີ່ໄດ້ຮັບຜົນກະທົບ<br>( ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ 20% ຂອງຊຸມຊົນ/ປະຊາຊົນໄດ້ຮັບຜົນກະທົບ) | ☑ | ☐ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍຕໍ່ບຸກຄົນ (ສະເລ່ຍ)<br>( ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກ່ວາ 800.000 ກີບຕໍ່ບຸກຄົນ) | ☑ | ☐ | ☐ |
| ລະດັບການປ່ຽນແປງຕໍ່ວິທີການດຳລົງຊີວິດຂອງບຸກຄົນ ທີ່ໄດ້ຮັບຜົນການກະທົບ<br>( ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ມີຜົນກະທົບຫຼາຍ ຕໍ່ວິທີການດຳລົງຊີວິດຂອງບຸກຄົນ) | ☑ | ☐ | ☐ |
| ການບໍ່ເຫັນດີຂອງບຸກຄົນທີ່ໄດ້ຮັບຜົນກະທົບ ຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ<br>(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງບຸກຄົນທີ່ໄດ້ຮັບຜົນກະທົບນັ້ນ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ) | ☑ | ☐ | ☐ |

### 4.2 ພາກທຸລະກິດ

#### 4.2.1 ຜົນກະທົບ

ກົດໝາຍວ່າດ້ວຍຊັບສິນທາງປັນຍາ ສະບັບນີ້ ຈະສົ່ງຜົນຕໍ່ການລົງທຶນ, ເຈົ້າຂອງຊັບສິນທາງປັນຍາທີ່ຕ້ອງການປົກປ້ອງສິດ.

**ຜົນກະທົບທາງບວກ**

- ສ້າງຄວາມເຊື່ອໝັ້ນໃຫ້ແກ່ຫົວໜ່ວຍທຸລະກິດ ຜູ້ປະກອບການ ແລະ ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດຫັນມາລົງທຶນໃສ່ທຸລະກິດການຜະລິດແລະການບໍລິການ;
- ສ້າງເງື່ອນໄຂໃຫ້ແກ່ເຈົ້າຂອງຊັບສິນທາງປັນຍານໍາໃຊ້ສິດຂອງຕົນ ແລະ ອໍານວຍຄວາມສະດວກດ້ານການຈົດທະບຽນຊັບສິນອຸດສາຫະກໍາ, ພັນພືດໃໝ່ ແລະ ການແຈ້ງລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດດີຂຶ້ນ;
- ເປັນການຮັບປະກັນ ການລົງທຶນ ແລະ ສົ່ງເສີມການທໍາທຸລະກິດຢູ່ພາຍໃນ ແລະ ຕ່າງປະເທດແບບຍືນຍົງ;
- ຮັບປະກັນ ໃນການປົກປ້ອງສິດ ແລະ ຜົນອັນຊອບທໍາທີ່ເກີດມາຈາກການລະເມີດ ແລະ ການແຂ່ງຂັນທີ່ບໍ່ເປັນທໍາ.

**ຜົນກະທົບທາງລົບ:** ບໍ່ມີ

#### 4.2.2 ເງື່ອນໄຂໃນການປະຕິບັດກົດໝາຍວ່າດ້ວຍຊັບສິນທາງປັນຍາ

- ບຸກຄົນ, ນິຕິບຸກຄົນຫຼືການຈັດຕັ້ງທີ່ພົວພັນກັບການປົກປ້ອງຊັບສິນທາງປັນຍາຕ້ອງເຄົາລົບ ແລະ ປະຕິບັດຕາມຂໍ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການຢ່າງເຂັ້ມງວດ ແລະ ຕ້ອງມີຄວາມສາມາດທາງດ້ານກົດໝາຍ ແລະ ປະສົບການ.

**ຄາດຄະເນຄ່າສິ້ນເປືອງສະເລ່ຍຕໍ່ຫົວໜ່ວຍທຸລະກິດໃນການປະຕິບັດນິຕິກໍາ:**

ຄ່າໃຊ້ຈ່າຍ ເບື້ອງຕົ້ນ (ຖ້າມີ): ບໍ່ມີ
ຄ່າໃຊ້ຈ່າຍ ໃນແຕ່ລະປີ: ບໍ່ມີ

#### 4.2.3 ການທາບທາມຄໍາເຫັນ

ກົດໝາຍວ່າດ້ວຍຊັບສິນທາງປັນຍາ ໄດ້ຮັບການທາບທາມຈາກບຸກຄົນ, ນິຕິບຸກຄົນຫຼື ການຈັດຕັ້ງ, ບັນດານັກທຸລະກິດ, ຫົວໜ່ວຍທຸລະກິດ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ, ລວມທັງພາຍນອກປະເທດ.

ການທາບທາມຄໍາເຫັນຖືໄດ້ວ່າໄດ້ຮັບຄໍາເຫັນທີ່ຫຼາກຫຼາຍ ແລະ ເປັນປະໂຫຍດໃຫ້ແກ່ຄະນະຮັບຜິດຊອບໃນການຄົ້ນຄ້ວາສ້າງກົດໝາຍວ່າດ້ວຍການຖ່າຍທອດເຕັກໂນໂລຊີ ເພື່ອໃຫ້ມີຄວາມສອດຄ່ອງກັບສະພາບຄວາມເປັນຈິງໃນການພັດທະນາເສດຖະກິດ-ສັງຄົມປັດຈຸບັນ.

#### 4.2.4 ສະຫຼຸບ

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈໍານວນຂະແໜງອຸດສາຫະກໍາທີ່ໄດ້ຮັບຜົນກະທົບ<br>( ຂໍ້ແນະນໍາ - ຜົນກະທົບຫຼາຍ ໝາຍເຖິງຂະແໜງອຸດສາຫະກໍາສ່ວນໃຫຍ່/ທັງໝົດໄດ້ຮັບຜົນກະທົບ) | ☑ | ☐ | ☐ |

| | | | |
|---|---|---|---|
| ຈຳນວນຫົວໜ່ວຍທຸລະກິດທີ່ໄດ້ຮັບຜົນກະທົບ<br>( ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກ່ວາ 30% ຂອງທຸລະກິດໃນຂະແໜງການໃດໜຶ່ງ ຫຼື 20% ຂອງທຸລະກິດລາວທີ່ຖືກຜົນກະທົບ) | ☑ | ☐ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍ ສຳລັບແຕ່ລະຫົວໜ່ວຍທຸລະກິດ (ສະເລ່ຍ)<br>( ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກ່ວາ 1.600.000 ກີບ ຕໍ່ໜຶ່ງຫົວໜ່ວຍທຸລະກິດ) | ☑ | ☐ | ☐ |
| ລະດັບການປ່ຽນແປງ ຕໍ່ວິທີການເຮັດທຸລະກິດ ທີ່ມີຢູ່ໃນປັດຈຸບັນ<br>( ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ມີການປ່ຽນແປງຢ່າງຫຼວງຫຼາຍ ໃນການດຳເນີນທຸລະກິດ) | ☑ | ☐ | ☐ |
| ການບໍ່ເຫັນດີຂອງພາກທຸລະກິດທີ່ໄດ້ຮັບຜົນກະທົບ ຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ<br>(ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງທຸລະກິດທີ່ໄດ້ຮັບຜົນກະທົບນັ້ນ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ) | ☑ | ☐ | ☐ |

**4.3 ລັດຖະບານ**

**4.3.1 ຜົນກະທົບ**

ພາຍຫຼັງກົດໝາຍວ່າດ້ວຍຊັບສິນທາງປັນຍາຖືກຮັບຮອງ ແລະ ປະກາດໃຊ້ ຈະກາຍເປັນເຄື່ອງມືທີ່ສຳຄັນໃຫ້ແກ່ລັດຖະບານ ໃນການຄຸ້ມຄອງກວດກາ ດ້ານຊັບສິນທາງປັນຍາ ຢູ່ ສປປ ລາວ.

ຮັບປະກັນການນຳໃຊ້ການປະດິດສ້າງ, ການປະດິດຄິດແຕ່ງ ເຂົ້າໃນການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໃຫ້ມີການພັດທະນາ ແບບຍືນຍົງ.

**ຜົນກະທົບທາງບວກ**

- ເປັນບ່ອນອີງທີ່ສຳຄັນສາມາດຄຸ້ມຄອງວຽກງານຊັບສິນທາງປັນຍາໃຫ້ເຂົ້າສູ່ລະບຽບການ ແລະ ແທດເໝາະກັບສະພາບຕົວຈິງຂອງ ສປປ ລາວ;
- ກົນໄກການປະສານງານກັບຂະແໜງການ ແລະ ພາກສ່ວນທີ່ກ່ຽວຂ້ອງມີຄວາມຊັດເຈນ ແລະ ຈະແຈ້ງ ເຮັດໃຫ້ການຈັດຕັ້ງປະຕິບັດວຽກງານມີຄວາມຄ່ອງຕົວ ແລະ ມີປະສິດທິຜົນສູງຂຶ້ນ;
- ມີນະໂຍບາຍສົ່ງເສີມ ເພື່ອກໍ່ໃຫ້ເກີດມີນະວັດຕະກຳໃໝ່ ແລະ ພັດທະນາວິທະຍາສາດ ແລະ ເຕັກໂນໂລຊີ.

**ຜົນກະທົບທາງລົບ**

ເພີ່ມລາຍຈ່າຍງົບປະມານ ຂອງລັດຖະບານ ເນື່ອງຈາກຕ້ອງໄດ້ມີການໃຊ້ຈ່າຍງົບປະມານເຂົ້າໃນການຄຸ້ມຄອງ,ຝຶກອົບຮົມ ແລະ ວຽກງານດ້ານການພັດທະນາບຸກຄະລາກອນ

**4.3.2 ເງື່ອນໄຂໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຊັບສິນທາງປັນຍາ**

ເຖິງແມ່ນວ່າກົດໝາຍວ່າດ້ວຍ ຊັບສິນທາງປັນຍາ ບໍ່ໄດ້ກຳນົດໂດຍກົງໃຫ້ລັດຖະບານຕ້ອງນຳໃຊ້ ງົບປະມານເຂົ້າໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ ແຕ່ເພື່ອສ້າງເງື່ອນໄຂໃຫ້ແກ່ການຄຸ້ມຄອງລັດ, ການພັດທະນາເສດຖະກິດ-ສັງຄົມ ແລະ ເພື່ອຮັບປະກັນໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຊັບສິນທາງປັນຍາໃຫ້ໄດ້ຮັບຜົນດີນັ້ນລັດຖະບານຄວນມີງົບປະມານເຂົ້າໃນການຝຶກອົບຮົມ, ຍົກລະດັບຄວາມຮູ້, ຄວາມສາມາດຂອງພະນັກງານວິຊາການ ໃນການສ້າງໂຄງລ່າງພື້ນຖານ ການກວດສອບຄຳຮ້ອງຂໍຈົດທະບຽນຊັບສິນອຸດສາຫະກຳ ແລະ ພັນພືດໃໝ່ ແລະ ການແຈ້ງຂໍ້ມູນ ລິຂະສິດ ແລະ ສິດກ່ຽວຂ້ອງກັບລິຂະສິດ, ການແກ້ໄຂຂໍ້ຂັດແຍ່ງທາງດ້ານຊັບສິນທາງປັນຍາ ແລະ ວຽກງານອື່ນໆ.

ຄ່າໃຊ້ຈ່າຍ ເບື້ອງຕົ້ນ : ບໍ່ມີ
ຄ່າໃຊ້ຈ່າຍຕໍ່ປີ: ບໍ່ມີ

#### 4.3.3 ການທາບທາມຄຳເຫັນ

ການປັບປຸງກົດໝາຍວ່າດ້ວຍ ຊັບສິນທາງປັນຍາ ນອກຈາກຈະມີຜູ້ຕາງໜ້າຈາກ ກະຊວງ ຍຸຕິທຳ, ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ, ສະພາແຫ່ງຊາດ, ກະຊວງ ອຸດສາຫະກຳ ແລະ ການຄ້າ ເຂົ້າຮ່ວມໃນຄະນະແລ້ວ, ຄະນະດັ່ງກ່າວ ຍັງໄດ້ນຳຮ່າງກົດໝາຍວ່າດ້ວຍຊັບສິນທາງປັນຍາ ໄປທາບທາມຄຳເຫັນນຳອົງການຈັດຕັ້ງລັດທຸກຂະແໜງການ ທັງສູນກາງ ແລະ ທ້ອງຖິ່ນ, ພ້ອມດຽວກັນນັ້ນ ກໍໄດ້ປະສານສົມທົບກັບຂະແໜງການກ່ຽວຂ້ອງສະເພາະທັງພາຍໃນ ແລະ ຕ່າງປະເທດຕື່ມອີກ ເພື່ອປຶກສາຫາລືບາງບັນຫາທີ່ເຫັນວ່າບໍ່ຈະແຈ້ງ.

ການທາບທາມຄຳເຫັນຈາກອົງການຈັດຕັ້ງຂອງລັດ ຖືວ່າ ໄດ້ຮັບຄຳເຫັນທີ່ຫຼາກຫຼາຍ ແລະ ເປັນປະໂຫຍດໃຫ້ແກ່ຄະນະຮັບຜິດຊອບ ໃນການພິຈາລະນາຄົ້ນຄ້ວາ ປັບປຸງເນື້ອໃນຮ່າງກົດໝາຍວ່າດ້ວຍຊັບສິນທາງປັນຍາຕາມຄວາມເໝາະສົມ ຊຶ່ງຄຳເຫັນທີ່ໄດ້ຮັບສາມາດສັງລວມໄດ້ ໂດຍພື້ນຖານແມ່ນເຫັນດີ ສະໜັບສະໜູນ ຕໍ່ການປັບປຸງກົດໝາຍວ່າດ້ວຍຊັບສິນທາງປັນຍາ ແລະ ເຫັນດີຕໍ່ເນື້ອໃນຂອງບົດປະເມີນ ຊຶ່ງຊີ້ໃຫ້ເຫັນແຈ້ງ ຜົນຄາດຄະເນໄດ້ໃນທາງບວກ ແລະ ທາງລົບ ທີ່ຈະເກີດຂຶ້ນຕໍ່ພາກລັດ.

#### 4.3.4 ສະຫຼຸບ

| ຕົວຊີ້ວັດຜົນກະທົບ | ບໍ່ມີ | ໜ້ອຍ | ຫຼາຍ |
|---|---|---|---|
| ຈຳນວນຂັ້ນ ການປົກຄອງ ທີ່ໄດ້ຮັບຜົນກະທົບ( ຂັ້ນສູນກາງ, ແຂວງ, ເມືອງ, ບ້ານ)<br>( ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງນິຕິກຳມີຜົນກະທົບໃນທຸກຂັ້ນຂອງການປົກຄອງ) | ☐ | ☑ | ☐ |

| | | | |
|---|---|---|---|
| ຈຳນວນ ອົງການຈັດຕັ້ງລັດ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ທີ່ໄດ້ຮັບຜົນກະທົບ ( ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກ່ວາ 20% ຂອງອົງການຈັດຕັ້ງລັດໃນແຕ່ລະຂັ້ນ ໄດ້ຮັບຜົນກະທົບ ເຊັ່ນ: ກະຊວງຢູ່ຂັ້ນສູນກາງ, ພະແນກການ ຢູ່ຂັ້ນແຂວງ) | ☐ | ✓ | ☐ |
| ຜົນກະທົບດ້ານຄ່າໃຊ້ຈ່າຍຂອງອົງການຈັດຕັ້ງລັດ ທີ່ໄດ້ຮັບຜົນກະທົບໃນການຄຸ້ມຄອງບໍລິຫານລັດ (ສະເລ່ຍ) ( ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ຫຼາຍກ່ວາ 40.000.000 ກີບ ຕໍ່ອົງການຈັດຕັ້ງລັດ ) | ☐ | ✓ | ☐ |
| ລະດັບການປ່ຽນແປງ ຕໍ່ວິທີການຈັດຕັ້ງປະຕິບັດວຽກງານຂອງລັດທະບານ ທີ່ມີຢູ່ໃນປັດຈຸບັນ ( ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ມີການປ່ຽນແປງຫຼາຍຕໍ່ການປະຕິບັດວຽກງານ ຂອງລັດຖະບານ ) | ☐ | ✓ | ☐ |
| ການບໍ່ເຫັນດີເປັນເອກະພາບ ຂອງອົງການຈັດຕັ້ງລັດ ທີ່ໄດ້ຮັບຜົນກະທົບ ຕໍ່ຮ່າງນິຕິກຳທີ່ສະເໜີສ້າງ ຫຼື ປັບປຸງ (ຂໍ້ແນະນຳ - ຜົນກະທົບຫຼາຍ ໝາຍເຖິງ ການເຫັນດີເປັນເອກະພາບລະຫວ່າງອົງການຈັດຕັ້ງລັດ ແມ່ນມີໜ້ອຍ ຫຼື ບໍ່ມີເລີຍ) | ✓ | ☐ | ☐ |

## 5.ການຈັດຕັ້ງປະຕິບັດ

### 5.1 ການສະໜັບສະໜູນ ແກ່ບຸກຄົນ

ເຜີຍແຜ່ເນື້ອໃນກົດໝາຍ ແລະ ລະບຽບທີ່ກ່ຽວຂ້ອງ.

### 5.2 ການສະໜັບສະໜູນແກ່ພາກທຸລະກິດ

- ເຜີຍແຜ່ເນື້ອໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
- ໃຫ້ການບໍລິການທາງດ້ານຂໍ້ມູນຂ່າວສານດ້ານຊັບສິນທາງປັນຍາ ແລະ ໃຫ້ຄຳປຶກສາ, ຄວາມຮູ້, ບົດຮຽນປະສົບການໃນການປົກປ້ອງຊັບສິນທາງປັນຍາ.

### 5.3 ແຜນການຈັດຕັ້ງປະຕິບັດ

ພາຍຫຼັງທີ່ກົດໝາຍວ່າດ້ວຍຊັບສິນທາງປັນຍາ ຖືກຮັບຮອງ ແລະ ປະກາດໃຊ້ແລ້ວ ພາກສ່ວນທີ່ມີໜ້າທີ່ໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍຊັບສິນທາງປັນຍາ ຕ້ອງເອົາໃຈໃສ່ໂຄສະນາເຜີຍແຜ່ກົດໝາຍສະບັບນີ້ໄປກະລະດັບພື້ນລະເມືອງທຸກຄົນ, ນັກປະດິດສ້າງ, ນັກປະດິດຄິດແຕ່ງ, ນັກຄົ້ນຄວ້າ, ນັກວິທະຍາສາດ ແລະ ນັກຮຽນຮູ້ປັນຍາຊົນລວມທັງຜູ້ດຳເນີນທຸລະກິດໃຫ້ມີສະຕິເຄົາລົບ, ຄວາມເຂົ້າໃຈ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ, ສ້າງກົນໄກປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອສ້າງເງື່ອນໄຂໃຫ້ການຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ, ກໍ່ສ້າງຍົກລະດັບຄວາມຮູ້ວິຊາການທີ່ກ່ຽວຂ້ອງໂດຍຮັບປະກັນໃນການຈັດຕັ້ງປະຕິບັດກົດໝາຍສະບັບນີ້ຢ່າງມີປະສິດທິຜົນ.

### 5.4 ງົບປະມານ ແລະ ແຫຼ່ງທຶນ

ບໍ່ໄດ້ກຳນົດໄວ້ໃນເນື້ອໃນນິຕິກຳ

**5.5 ທົບທວນຄືນ**

ພາຍຫຼັງທີ່ກົດໝາຍວ່າດ້ວຍຊັບສິນທາງປັນຍາມີຜົນສັກສິດ ແລະ ຫຼັງຈາກ ຜັນຂະຫຍາຍ ແລະ ຈັດຕັ້ງປະຕິບັດກົດໝາຍໃນໄລຍະໜຶ່ງ, ອົງການຄຸ້ມຄອງຕ້ອງໄດ້ດຳເນີນ ການສຳຫຼວດ ແລະ ປະເມີນຜົນ ການຜັນຂະຫຍາຍ ແລະ ການຈັດຕັ້ງປະຕິບັດກົດໝາຍດັ່ງກ່າວ ໂດຍອີງໃສ່ງົບປະມານ ແລະ ຊັບພະຍາກອນທີ່ມີ ເພື່ອໃຫ້ສອດຄ່ອງກັບສະພາບການຂະຫຍາຍຕົວຂອງປະເທດ ແລະ ສາກົນໃນແຕ່ລະໄລຍະ;

ອົງການຄຸ້ມຄອງຊັບສິນທາງປັນຍາທຸກຂັ້ນ ຕ້ອງໄດ້ປະສານສົມທົບ ກັບຂະແໜງການອື່ນ ທີ່ກ່ຽວຂ້ອງ ລວມທັງພາກສ່ວນທຸລະກິດ, ພາກສ່ວນເອກະຊົນ ເພື່ອຄົ້ນຄວ້າ ແລະ ສັງລວມຄຳເຫັນກ່ຽວກັບປະສິດທິພາບໃນການຈັດຕັ້ງປະຕິບັດຂອງກົດໝາຍພາຍຫຼັງ 01 ຫຼື 02 ປີ ທີ່ກົດໝາຍມີຜົນບັງຄັບໃຊ້ ເພື່ອຈະໄດ້ເປັນຂໍ້ມູນໃນການປັບປຸງກົດໝາຍ ກໍຄືການແກ້ໄຂວຽກງານຊັບສິນທາງປັນຍາ ໃນແຕ່ລະໄລຍະໃຫ້ສອດຄ່ອງກັບສະພາບຄວາມເປັນຈິງຂອງສັງຄົມ ແລະ ການຂະຫຍາຍຕົວທາງດ້ານເສດຖະກິດຂອງປະເທດຊາດ.

## ການອະນຸມັດ

ໄດ້ເຮັດອັນໃດໃນລຸ່ມນີ້:

1. ☐ ເຊັນບົດປະເມີນຜົນກະທົບຂອງຮ່າງນິຕິກຳ ( ຂັ້ນຕອນເບື້ອງຕົ້ນ ) ເພື່ອສະເໜີຫາອົງການຮັບຜິດຊອບກວດກາກວດກາຄືນ ແລະ ໃຫ້ຄຳແນະນຳຫຼື
2. ☐ ເຊັນບົດປະເມີນຜົນກະທົບຂອງຮ່າງນິຕິກຳ ( ຂັ້ນສຸດທ້າຍ ) ເພື່ອສະເໜີຫາອົງການຮັບຜິດຊອບກວດກາມີຄຳເຫັນຕໍ່ບົດປະເມີນຜົນ

ນະຄອນຫຼວງວຽງຈັນ, ວັນທີ 16 ມິຖຸນາ 2017
ຫົວໜ້າຄະນະຮັບຜິດຊອບ
ປັບປຸງກົດໝາຍຊັບສິນທາງປັນຍາ